SDCS San Diego City Schools
Fact Sheet
ລະດູໃບໄມ້ປົ່ງ 2004

# ມີຫລາຍໆຢ່າງທີ່ພວກນັກຮຽນສາມາດຢຸດຢັ້ງຄວາມຮຸນແຮງຢູ່ໃນໂຮງຮຽນ

ສະພາປ້ອງກັນການກະທຳຜິດກົດໝາຍຂອງຊາດຂໍໃຫ້ຊ່ວຍຢຸດຢັ້ງຄວາມຮຸນແຮງຢູ່ໃນໂຮງຮຽນ ໃນບັນຊີຄວາມຄິດເຫລົ່ານີ້. ບາງຢ່າງຕ້ອງໄດ້ກະທຳສ່ວນບຸກຄົນ; ບາງຢ່າງຕ້ອງໄດ້ປະຕິບັດຮ່ວມກັນ. ບາງຢ່າງເປັນເລື່ອງຮີບດ່ວນກອນໝູ່. ອີກອັນໆເປັນບັນຫາທີ່ສ້າງໃຫ້ເກີດຄວາມຮຸນແຮງ. ຈົ່ງພິຈາລະນາເບິ່ງໃນບັນຊີນີ້ – ຍັງມີຫລາຍໆຢ່າງທີ່ສາມາດນຳມາໃຊ້.

ໃຫ້ຟັງຄວາມພໍ່ແມ່ ແລະ ປະຕິບັດຕາມຄຳແນະນຳຂອງໂຮງຮຽນ ກ່ຽວກັບເລື່ອງຄວາມປອດໄພຢູ່ສະເໝີ.

1. ປະຕິເສດຕໍ່ການຖືອາວຸດໄປໂຮງຮຽນ, ປະຕິເສດການຖືອາວຸດໃຫ້ຜູ້ໃດຜູ້ນຶ່ງ, ແລະ ປະຕິເສດການຮູ້ນເຊື່ອກ່ຽວກັບການເຫັນບຸກຄົນຖືອາວຸດ.
2. ລາຍງານການກະທຳຜິດກົດໝາຍຕໍ່ເຈົ້າໜ້າທີ່ໂຮງຮຽນ ຫລື ເຈົ້າໜ້າທີ່ຕຳຫລວດໂດຍທັນທີ.
3. ລາຍງານການປະພຶດ ຫລື ການໄດ້ຍິນຂອງນັກຮຽນຄົນອື່ນທີ່ຜິດປົກກະຕິ ຫານາຍຄູ ຫລື ຄູແນະນຳໃນໂຮງຮຽນ. <u>ເຈົ້າອາດຊ່ວຍຊີວິດຂອງຄົນອື່ນໄວ້ໄດ້.</u>
4. ຮຽນວິທີຄວບຄຸມຈິດໃຈຂອງຕົນເອງໃຫ້ດີ. ຊອກຫາຊ່ອງທາງລະງັບການຖົກຖຽງກັນ ໂດຍການໄດ້ລົມໃຫ້ເຂົ້າໃຈກັນ, ຫລື ຍ່າງໜີອອກໄປ ແທນທີ່ຈະຕອບໂຕ້ກັນ.
5. ຊອກຫາການຖົກຖຽງຂອງຜູ້ອື່ນໃຫ້ສົງລົງແບບສັນຕິສຸກ. ເລີ່ມຫລືເຂົ້າຮ່ວມໂຄງການນັກຮຽນໄກ່ເກ່ຍບັນຫານັກຮຽນ, ທີ່ຝຶກນັກຮຽນເພື່ອຊ່ວຍເຫລືອພວກນັກຮຽນນຳກັນລະງັບການຖົກຖຽງກັນ ໂດຍຫລີກເວັ້ນການຕອບໂຕ້ກັນ ຫລື ການໃຊ້ອາວຸດທຳລາຍກັນ.
6. ຈັດຕັ້ງສາມຂອງນັກຮຽນຂຶ້ນ, ໃຫ້ພວກນັກຮຽນເປັນຜູ້ພິພາກສາ, ໄອຍະການ, ຄະນະຊຸນສານ, ແລະ ທະນາຍຝ່າຍຈຳເລີຍ, ສາມາດຊາໝູນນ້ອຍທີ່ສາມາດພິຈາລະນາເລື່ອງຕ່າງໆ, ຊອກຫາເຫດຜົນ ແລະ ກຳນົດໂທດ, ຫລື ຕັ້ງໂທດໃສ່ຂັ້ນຄວາມຜິດຕ່າງໆ. ພວກໝູ່ນ້ອຍໄດ້ເຂົ້າພົວພັນໃນການດຳເນີນງານໂດຍເຂົາເຈົ້າເອງ ແທນທີ່ມີແຕ່ຜູ້ໃຫຍ່–ເຮັດວຽກໃຫ້ລະບົບການຍຸຕິທຳຂອງພວກເດັກນ້ອຍ.
7. ເຂົ້າຮ່ວມເປັນຜູ້ແນະນຳໝູ່ນັກຮຽນ, ເຮັດວຽກກັບໝູ່ນັກຮຽນໃນຫ້ອງດຽວກັນ ສຳຫລັບພວກທີ່ຕ້ອງການຄວາມຊ່ວຍເຫລືອໃນບັນຫາຕ່າງໆ.
8. ເຂົ້າຮ່ວມເປັນຜູ້ແນະນຳ ນຳພາຜູ້ອາຍຸນ້ອຍກວ່າ. ເປັນບຸກຄົນຕົວຢ່າງ ແລະ ເປັນເພື່ອນມິດ, ເຈົ້າສາມາດຊ່ວຍຜູ້ມີອາຍຸນ້ອຍກວ່າຈາກຄວາມຍາກລຳບາກເປັນງາຍ ໃນການປັບຕົວເຂົ້າສະພາບຢູ່ໃນໂຮງຮຽນ ແລະ ຜູ້ທີ່ຂໍຄວາມຊ່ວຍເຫລືອ.
9. ເລີ່ມເຂົ້າຮ່ວມໃນຄະນະດູແລການກະທຳຜິດກົດໝາຍໃນໂຮງຮຽນ. ເຂົ້າຮ່ວມຄະນະສາລະຮັກສາຄວາມສະຫງົບຂອງພວກນັກຮຽນ ຍັງຊ່ວຍສອດສ່ອງທາງຍ່າງຈາກຕຶກນຶ່ງໄປຫາຕຶກນຶ່ງ, ນອກຈາກຄອງ ແລະ ຫ້ອງນອນພວກນັກຮຽນ, ແລະ ເປັນວິທີນຶ່ງສຳຫລັບໃຫ້ພວກນັກຮຽນລາຍງານບັນຫາແບບລັບໆ.
10. ຖາມເບິ່ງກຳຈັນ ຫລື ສະໂມສອນທີ່ພວກນັກຮຽນເຂົ້າຮ່ວມແຕ່ລະຄົນ ເພື່ອນຳໃຊ້ດຳລັງບັນການຕໍ່ຕ້ານ–ຄວາມຮຸນແຮງ. ໜັງສືພິມສາມາດລົງບົດເລື່ອງກ່ຽວກັບການປ້ອງກັນຄວາມຮຸນແຮງ; ສະໂມສອນສິລະປະການແຕ້ມຮູບສາມາດແຕ້ມຮູບສະແດງການເສັຍຫາຍຂອງຄວາມຮຸນແຮງ. ສະໂມສອນວິຊາຊີບສາມາດສຶກສາເບິ່ງວ່າຄວາມຮຸນແຮງອັນນີ້ມີຜົນສະທ້ອນແກ່ເປົ້າໝາຍວິຊາຊີບຂອງເຂົາເຈົ້າແນວໃດ. ກິລາສາມາດໃຊ້ເປັນວິທີຍອມຍາກັບຄວາມຮຸນແຮງອີກດ້ານນຶ່ງ ເຖິງວ່າມັນຢູ່ໃນແຜນການຫລັກສູດກໍຕາມ.
11. ຕ້ອນຮັບພວກນັກຮຽນໃໝ່ ແລະ ຊ່ວຍໃຫ້ເຂົາເຈົ້າມີຄວາມຮູ້ສຶກສະບາຍໃຈໃນໂຮງຮຽນຂອງເຈົ້າ. ແນະນຳເຂົາເຈົ້າໃຫ້ຮູ້ຈັກກັບນັກຮຽນຄົນອື່ນໆ. ຊອກຮູ້ຈັກກັບນັກຮຽນຄົນອື່ນໆທີ່ຍັງບໍ່ຮູ້ຈັກເຈົ້າຢ່າງນ້ອຍນຶ່ງອາທິດຕໍ່ຄົນນຶ່ງ.
12. ເລີ່ມເຂົ້າຮ່ວມ (ຫລື ຈັດຊື່ເຂົ້າຮ່ວມ) ການໂຄສະນາຫາສຽງ "ການປະກັນຄວາມສະຫງົບສຸກ" ທີ່ພວກນັກຮຽນສັນຍາຈະລະງັບເລື່ອງບໍ່ລົງລອຍກັນນັ້ນ ໂດຍບໍ່ໃຫ້ເກີດຄວາມຮຸນແຮງ, ບໍ່ໃຊ້ອາວຸດ, ແລະ ເພື່ອເຮັດໃຫ້ພວກນັກຮຽນທັງໝົດໃນເຂດໂຮງຮຽນມີຄວາມປອດໄພ. ພະຍາຍາມຮ່ວມພວກນັກຮຽນ 100 ເປີເຊັນ.

## ຂໍ້ສລູບ

- ❖ ປະຕິເສດຕໍ່ການຖືເອົາອາວຸດໄປໂຮງຮຽນ
- ❖ ລາຍງານການຜິດກົດໝາຍທຸກຢ່າງໂດຍທັນທີ.
- ❖ ລາຍງານການປະພຶດທີ່ຜິດປົກກະຕິ
- ❖ ຮຽນຮູ້ການຄວບຄຸມຈິດໃຈຂອງຕົນເອງ
- ❖ ຊ່ວຍຜູ້ອື່ນລະງັບການຖົກຖຽງໃນແບບສັນຕິວິທີ
- ❖ ຈັດຕັ້ງສານຂອງນັກຮຽນຂຶ້ນ
- ❖ ຊ່ວຍເພື່ອນນັກຮຽນຫ້ອງດຽວກັນທີ່ຕ້ອງການຊ່ວຍເຫລືອໃນບັນຫາຂອງເຂົາເຈົ້າ
- ❖ ປະຕິບັດເປັນນັກຮຽນຕົວຢ່າງສຳຫລັບພວກນັກຮຽນທີ່ມີອາຍຸນ້ອຍກວ່າ
- ❖ ເລີ່ມເຂົ້າຮ່ວມຄະນະຈອບແອງການກະທຳຜິດກົດໝາຍໃນໂຮງຮຽນ
- ❖ ນຳໃຊ້ການໂຄສະນາຫາສຽງຕໍ່ຕ້ານ–ຄວາມຮຸນແຮງຢູ່ໃນໂຮງຮຽນ
- ❖ ຕ້ອນຮັບພວກນັກຮຽນໃໝ່ ແລະ ເຮັດໃຫ້ເຂົາເຈົ້າມີຄວາມຮູ້ສຶກສະບາຍໃຈ
- ❖ ຂຽນປ້າຍ "ການປະກັນຄວາມສະຫງົບສຸກ" ເພື່ອລະງັບເລື່ອງບໍ່ລົງລອຍກັນ ໂດຍຫລີກເວັ້ນຄວາມຮຸນແຮງ
- ❖ ພະຍາຍາມຮ່ວມກັບນັກຮຽນທຸກໆຄົນ 100 ເປີເຊັນ.

*ບົດຄວາມສະບັບນີ້ໃຫ້ມາ ແລະ ພິມໂດຍຮັບອະນຸຍາດຈາກສະພາປ້ອງກັນພັຍຂອງຊາດ ©.*
*ລາຍລະອຽດເພີ້ມກ່ຽວກັບ ສະພາປ້ອງກັນພັຍຂອງຊາດນີ້ ຂໍໃຫ້ອ່ານທີ່* (www.ncpc.org).
*ລາຍລະອຽດເພີ້ມກ່ຽວກັບ ເຈົ້າໜ້າທີ່ຕຳຫລວດບໍຣິການເມືອງແຊນດີເອໂກ ຂໍໃຫ້ອ່ານທີ່* (http:prod031.sandi.net/policeservices/).
*ລະຫັດບັນທະນາການການພິມຈາກມູນນິທິ Annie E. Casey Foundation*

ເພື່ອລາຍລະອຽດຕິດຕໍ່ຫາ: Police Services Department: (619) 725-7000 Administration (619) 291-7678 Dispatch
Media inquires: (619) 725-5578
www.sandi.net

"ບໍຣິການຊ່ວຍເຫລືອນັກຮຽນເກືອບ 138,000 ຄົນ, ສູນການສຶກສາແຊນດີເອໂກເປັນສູນການໃຫຍ່ທີ່ສຸດທີ່ສອງໃນຣັຖແຄລີຟໍເນັຍ. ມີໂຮງຮຽນທັງໝົດປະມານ 200 ແຫ່ງ ແລະ ມີພະນັກງານທີ່ຮຽນເຫາຄ່າແຫນ່ງເຕັມເວລາຫລາຍກວ່າ 14,500 ຄົນ (ເປັນຕົວແທນໃຫ້ຈ້າງນອນພະນັກງານຫລາຍກວ່າ 15,800 ຄົນ). ໂຮງຮຽນເຂດສຶກສາແຊນດີເອໂກປັບປຸງຄວາມສຳເຣັດແນບຊຸກໃສ່ການສິດສອນວິຊາອ່ານ, ວິຊາຂຽນ ແລະ ວິຊາເລກໃນໂຮງຮຽນອະນຸບານ (K) ເຖິງປີທີ 12. ສູນການສຶກສາໄດ້ຖືໂອນໃຈເພື່ອຊ່ວຍເຫລືອບັນດາໂຮງຮຽນຕ່າງໆ ແລະ ສົ່ງເສີມໃຫ້ສະພາບແວດລ້ອມການຮຽນຢູ່ໃນຫ້ອງໂດຍການດຶງໂຮງຮຽນແລະ ວັດຖຸການຮຽນທີ່ທັນສມັຍ ແລະ ໂດຍການພົວພັນພໍ່ແມ່, ຄູອາຈານ, ແລະ ຊຸມຊົນເຂົ້າໃນການດຳເນີນງານຂອງການສຶກສາ."

ພາລະໜ້າທີ່ຂອງໂຮງຮຽນເຂດສຶກສາແຊນດີເອໂກແມ່ນເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນ
ໂດຍຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮ່ຳຮຽນຢູ່ໃນຫ້ອງຮຽນ.